**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ສໍານັກງານຂໍ້ມູນຕ້ານການຟອກເງິນ

ເລກທີ 495 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 08 MAY 2020

# ແຈ້ງການ

**ເຖິງ:** ທ່ານ ຜູ້ອໍານວຍການ ແລະ ຜູ້ຈັດການ ບໍລິສັດຕົວແທນຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍ ວັດຖຸມີຄ່າ ແລະ ເຄື່ອງເກົ່າ, ສະພາທະນາຍຄວາມ ຫຼື ວິສາຫະກິດກົດໝາຍ, ອົງການທະບຽນສານ, ບໍລິສັດກວດສອບບັນຊີ ແລະ ກາຊີໂນ ທີ່ນັບຖື.

**ເລື່ອງ:** ການປັບປຸງລະບົບການລາຍງານ ຜ່ານລະບົບອອນລາຍ.

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກໍາທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກໍາເງິນສົດ ທີ່ມີມູນຄ່າເກີນກໍານົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015.

ສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອໃຫ້ການນໍາໃຊ້ລະບົບການລາຍງານມີຄວາມພຽງພໍຕໍ່ການນໍາໃຊ້ ແລະ ຕອບສະໜອງໄດ້ຄວາມຕ້ອງການຂອງ ສຕຟງ ແລະ ຜູ້ລາຍງານ ຈຶ່ງໄດ້ມີການປັບປຸງລະບົບການລາຍງານ ຜ່ານລະບົບອອນລາຍ ໂດຍການເພີ່ມຮູບແບບຂອງການໃຊ້ງານ (Functions) 03 ຮູບແບບຄື:

1. **ການລາຍງານອື່ນໆ:** ເພື່ອຊ່ວຍໃຫ້ ສາມາດແຈ້ງຕອບການຮ້ອງຂໍຂອງ ສຕຟງ ຫຼື ສົ່ງຂໍ້ມູນເພີ່ມເຕີມກ່ຽວກັບບົດລາຍງານ STR ມາໃຫ້ ສຕຟງ ໄດ້ຢ່າງວ່ອງໄວ ແລະ ສະດວກສະບາຍ;
2. **ການລາຍງານທຸລະກໍາເງິນສົດ ທີ່ມີມູນຄ່າເກີນກໍານົດ (CTR) ທີ່ໄດ້ລາຍງານຜ່ານມາ:** ສາມາດເບິ່ງການລາຍງານ CTR ທັງໝົດ ທີ່ຕົນເຄີຍລາຍງານມາຍັງ ສຕຟງ;
3. **ການປະກອບຄໍາເຫັນ:** ສາມາດປະກອບຄາຄິດເຫັນກ່ຽວກັບລະບົບການສົ່ງລາຍງານອອນລາຍ ໄດ້ວ່າຢາກໃຫ້ມີການປັບປຸງ ຫຼື ແກ້ໄຂຈຸດໃດ ເພື່ອຊ່ວຍໃຫ້ ສຕຟງ ນໍາມາພິຈາລະນາ ແລະ ພັດທະນາລະບົບໃຫ້ດີຂຶ້ນຕໍ່ໄປ.

ສໍາລັບລາຍລະອຽດ ສາມາດດາວໂຫຼດຄູ່ມືທີ່ກໍານົດຂັ້ນຕອນຕ່າງໆຂອງການລາຍງານ ທີ່ເວບໄຊທ໌ ສຕຟງ www.amlio.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານດາວໂຫຼດ ເພື່ອປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າສໍານັກງານຂໍ້ມູນຕ້ານການຟອກເງິນ.**

P. 5/

ແພງສີ ແພງເມືອງ

- ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່: ສໍານັກງານຂໍ້ມູນຕ້ານການຟອກເງິນໂທ 021 264506